ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ເລກທີ 900 /ກງ

ນະຄອນຫລວງ, ວັນທີ 31 MAR 2015

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການ ກະຊວງການເງິນ ວ່າດ້ວຍ ການຮັບຮອງ ປຶ້ມຄູ່ມືການບັນຊີ ຂອງອົງການຈັດຕັ້ງລັດ

- ອີງຕາມ ກົດໝາຍ ວ່າດ້ວຍການບັນຊີ ( ສະບັບປັບປຸງ ) ສະບັບເລກທີ 047/ສພຊ, ລົງວັນທີ 26 ທັນວາ 2013 ;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 29 ກຸມພາ 2007 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງການເງິນ ສະບັບເລກທີ 2862/ກງ, ລົງວັນທີ 29 ຕຸລາ 2013 ວ່າດ້ວຍການຮັບຮອງເອົາສາລະບານງົບປະມານ-ບັນຊີ ອັນດຽວທີ່ເປັນເອກະພາບ;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມບັນຊີ ກະຊວງການເງິນ.

### ລັດຖະມົນຕີວ່າການ ກະຊວງການເງິນ ຕົກລົງ :

**ມາດຕາ 01 :** ເຫັນດີ ຮັບຮອງເອົາປຶ້ມຄູ່ມືການບັນຊີ ຂອງອົງການຈັດຕັ້ງລັດ ເພື່ອເປັນພື້ນຖານໃຫ້ແກ່ຈັດຕັ້ງປະຕິບັດວຽກງານການບັນຊີ ໃນຂົງເຂດພາກລັດ ກໍ່ຄື ບັນດາອົງການຈັດຕັ້ງຕ່າງໆຂອງລັດ .

**ມາດຕາ 02 :** ມອບໃຫ້ ກົມບັນຊີ ກະຊວງການເງິນ ເປັນຜູ້ຊີ້ນຳລະອຽດ ໃນການຈັດຕັ້ງປະຕິບັດປຶ້ມຄູ່ມືດັ່ງກ່າວ ໃນການເຜີຍແຜ່, ແນະນຳ, ຈັດຕັ້ງ, ຊຸກຍູ້ຕິດຕາມ ແລະ ກວດກາປະເມີນຜົນ ໃຫ້ໄດ້ຮັບຜົນດີ. ຜ່ານການຈັດຕັ້ງປະຕິບັດ ຫາກບໍ່ສອດຄ່ອງກັບເງື່ອນໄຂຕົວຈິງ ໃຫ້ຮີບຮ້ອນປັບປຸງແກ້ໄຂແຕ່ລະໄລຍະ.

**ມາດຕາ 03 :** ມອບໃຫ້ ບັນດາກະຊວງ, ອົງການທຽບເທົ່າ ຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດປຶ້ມຄູ່ມືດັ່ງກ່າວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ ແຕ່ສົກປີ 2015-2016 ເປັນຕົ້ນໄປ.

**ມາດຕາ 04 :** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ ກະຊວງການເງິນ,

ກະຊວງການເງິນ

ດຣ. ລຽນ ທິແກ້ວ